# ແຈ້ງຂ່າວ ຄວາມຄືບໜ້າອຸບັດຕິເຫດເຮືອບິນຕົກ

ກະຊວງໂຍທາທິການ ແລະຂົນສົ່ງ ຂໍແຈ້ງຄວາມຄືບໜ້າ ການດຳເນີນການຊອກຄົ້ນ ແລະ ເກັບກູ້ຊາກສົບຜູ້ປະສົບເຄາະຮ້າຍ ຈາກເຫດເຮືອບິນຕົກ ທີ່ເມືອງປາກເຊ ແຂວງຈຳປາສັກ ວ່າ: ວັນທີ 24 ຕຸລາ 2013 (ສະຖິຕິໃນເວລາ 18:00 ໂມງ) ພົບເຫັນ ແລະເກັບກູ້ໄດ້ສົບຜູ້ເຄາະຮ້າຍ ແລະ ສິ້ນສ່ວນໄດ້ເພີ່ມລວມເປັນ 44 ສົບ ແລະ 30 ສິ້ນສ່ວນ.

ຜົນການບັນທຶກຂໍ້ມູນ ແລະ ຊັນນະສູດ ສາມາດໃຈ້ແຍກໄດ້ 26 ສົບ, ໃນນັ້ນ 10 ສົບ ແມ່ນຄົນລາວ ແລະ ໄດ້ສົ່ງໃຫ້ຍາດພີ່ນ້ອງຂອງຜູ້ເສັຍຊີວິດ ເພື່ອຈັດພິທີຊາປານະກິດສົບ ຕາມຮີດຄອງປະເພນີແລ້ວ ສ່ວນອີກ 18 ສົບ ຍັງຮັກສາໄວ້ຢູ່ວັດຈີນ ເມືອງປາກເຊ.

ສຳລັບຜົນການຊອກຫາຊາກເຮືອບິນ ແລະກອ່ງດຳ ທາງຄະນະກຳມະການ ຍັງສືບຕໍ່ເຮັດໜ້າທີ່ຂອງຕົນຢ່າງເຕັມທີ່ ເພື່ອໃຫ້ສາມາດນຳກອງດຳຂື້ນມາໃຫ້ໄດ້ຕາມ ຈຸດປະສົງ ຫາກມີຄວາມຄືບໜ້າເພີ່ມເຕີມປະການໃດຈະລາຍງານໃຫ້ທ່ານຊາບຕື່ມອີກ.